ສະຖາບັນຄົ້ນຄວ້າວິທະຍາສາດ ເຕັກນິກ ກະສິກຳ ແລະ ປ່າໄມ້

ໂຄງການຄົ້ນຄວ້າເຂດພູດອຍ ແລະ ພັດທະນາຄວາມເຂັ້ມແຂງ.

# ບົດລາຍງານ

# ຜົນການວິເຄາະລະບົບ ແລະ ແບ່ງເຂດນິເວດກະສິກຳ ແລະ ປ່າໄມ້, ເມືອງ ວຽງພູຄາ, ແຂວງ ຫລວງນ້ຳທາ.




ໂດຍ: ທ່ານ ຄຳພາ ຈັນທິລາດ ແລະ ທ. ຄຳສອນ ສິມມະນີວົງ

ໂຄງການຍ່ອຍຄຸ້ມຄອງການຄົ້ນຄວ້າ.

ໂຄງການຄົ້ນຄວ້າເຂດພູດອຍ ແລະ ພັດທະນາຄວາມເຂັ້ມແຂງ

ກຸມພາ, 2008.

# ສາລະບານ


I. ພາກສະເໜີ ..... 3

1.1 ຈຸດປະສົງ ..... 3

II. ວິທີການຈັດຕັ້ງປະຕິບັດ. ..... 4

2.1 ເຄື່ອງມືທີ່ນຳໃຊ້ ..... 4

2.1.1 ການວິເຄາະ ແລະ ແບ່ງເຂດນິເວດກະສິກຳ ປ່າໄມ້(AEZ ແລະ AEA) ລະດັບເມືອງ: ..... 4

2.1.2 ການປະເມີນຜົນແບບມີສ່ວນຮ່ວມກັບຊາວກະສິກອນ (PRA) ໃນຂັ້ນບ້ານ: ..... 4

2.2 ຂະບວນການຈັດຕັ້ງປະຕິບັດ. ..... 4

2.2.1 ຢູ່ ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ: ..... 4

2.2.2 ຢູ່ ເມືອງ ວຽງພູຄາແຂວງ ຫລວງນ້ຳທາ. ..... 5

2.3 ພະນັກງານເຂົ້າຮ່ວມ ..... 6

2.4 ຂໍ້ມູນທີ່ນຳໃຊ້ ..... 6

III. ຜົນໄດ້ຮັບ. ..... 7

3.1 ສະພາບລວມ ..... 7

3.1.1 ທີ່ຕັ້ງ ແລະ ຂອບເຂດຊາຍແດນ: ..... 7

3.1.2 ການປົກຄອງ ແລະ ພົນລະເມືອງ. ..... 7

3.1.3 ສະພາບພູມອາກາດ ..... 8

3.1.4 ສະພາບການນຳໃຊ້ທີ່ດິນ ແລະ ການຜະລິດກະສິກຳ. ..... 8

3.1.5 ສະພາບການລ້ຽງສັດ ..... 8

3.1.6 ສະພາບການປູກໄມ້ອຸດສະຫະກຳ. ..... 9

3.1.7 ສະພາບພື້ນຖານໂຄງລ່າງ. ..... 9

3.1.8 ສະພາບການລົງທຶນໃນຂົງເຂດກະສິກຳ ແລະ ປ່າໄມ້ ..... 9

3.1.9 ທ່າແຮງຂອງເມືອງ ວຽງພູຄາ ..... 9

3.2 ການກຳນົດ ແລະ ແບ່ງເຂດນິເວດກະສິກຳ ແລະ ປ່າໄມ້. ..... 10

3.3 ການອະທິບາຍເຂດນິເວດ ..... 10

3.3.1 ການອະທິບາຍ ເຂດນິເວດ1: ..... 10

3.3.2 ການອະທິບາຍເຂດນິເວດ2 ..... 12

3.3.3 ການອະທິບາຍ ເຂດນິເວດ 3: ..... 14

3.3.4 ການຈັດບູລະມະສິດບັນຫາໃນເຂດນິເວດ ..... 16

IV. ສະຫຼຸບ ແລະ ຖອດຖອນບົດຮຽນ. ..... 19

4.1 ຂົງເຂດການຄົ້ນຄວ້າ ..... 19

4.2 ຫົວຂໍ້ການຄົ້ນຄວ້າ ປະຈຳສົກປີ 2008-2009 ..... 200

V. ແຜນການຕໍ່ໜ້າ: ..... 200

I.ພາກສະເໜີ.

ໂຄງການຄົ້ນຄວ້າເຂດພູດອຍ ແລະ ພັດທະນາຄວາມເຂັ້ມແຂງ ຊຶ່ງເປັນໂຄງການໄລຍະສອງທີ່ສະໜັບສະໜູນໂດຍອີງ ການຊີດາ ສືບຕໍ່ສະໜັບສະໜູນ ສະຖາບັນຄົ້ນຄວ້າ ວິທະຍາສາດ ເຕັກນິກ ກະສິກຳ ແລະ ປ່າໄມ້ ເພື່ອພັດທະນາ ແລະ ຂະຫຍາຍວຽກງານຄົ້ນຄວ້າດ້ານກະສິກຳ ແລະ ປ່າໄມ້ໃນເຂດພູດອຍ ໂດຍມີສ່ວນຮ່ວມຂອງພາກສ່ວນຕ່າງໆຈາກທ້ອງຖິ່ນໃນສີ່ແຂວງ, ແປດເມືອງເປົ້າໝາຍຂອງໂຄງການລວມທັງເມືອງໂພນໄຊ ແລະ ເມືອງ ນາໝໍ້ ທີ່ໄດ້ຈັດ ຕັ້ງປະຕິບັດ ໃນໄລຍະທີ່ໜຶ່ງຜ່ານມາ.

ການວິເຄາະລະບົບ ແລະ ແບ່ງເຂດນິເວດກະສິກຳ ປ່າໄມ້ ແມ່ນໜ້າວຽກນຶ່ງ ຂອງໂຄງການຍ່ອຍຄຸ້ມຄອງການຄົ້ນຄວ້າ ທີ່ມີຄວາມສຳຄັນ ແລະ ຈຳເປັນທີ່ສຸດ ເພື່ອຊ່ວຍໃນການສ້າງແຜນການ ແລະ ກຳນົດຂົງເຂດການຄົ້ນຄ້ວາຢູ່ໃນ 6 ເມືອງ ເປົ້າໝາຍໃໝ່ ຂອງໂຄງການ ບົນພື້ນຖານຄວາມເຂົ້າໃຈກ່ຽວກັບເງື່ອນໄຂທາງດ້ານກາຍຍະພາບ, ລະບົບການ ຜະລິດກະສິກຳ-ປ່າໄມ້ ທີ່ຕິດພັນກັບວິຖີການດຳລົງຊີວິດຂອງຊາວກະສິກອນເຜົ່າຕ່າງໆ ໃນແຕ່ລະເຂດນິເວດກະສິກຳ-ປ່າໄມ້; ເພື່ອກຳນົດປະເດັນສຳຄັນ ແລະ ກຸ່ມບັນຫາໃນການ ຈັດບູລິມະ ສິດສຳລັບການຄົ້ນຄ້ວາ.

ພາຍຫຼັງສຳເລັດການວິເຄາະລະບົບ ແລະ ແບ່ງເຂດນິເວດກະສິກຳ ປ່າໄມ້ ຢູ່ 6 ເມືອງ ເປົ້າໝາຍໂຄງການ : ເມືອງ ເມືອງ ວຽງຄຳ ແຂວງ ຫຼວງພະບາງ, ເມືອງ ຮຸນ ແຂວງ ອຸດົມໄຊ, ເມືອງ ນາແລ, ວຽງພູຄາ ແຂວງ ຫຼວງນ້ຳທາ, ເມືອງ ຜາອຸດົມ ແລະ ເມືອງ ເມິງ ແຂວງ ບໍ່ແກ້ວ, ໂຄງການຍ່ອຍຄຸ້ມຄອງການຄົ້ນຄວ້າໄດ້ຈັດກອງປະຊຸມກ່ຽວກັບ ການວິເຄາະລະບົບນິເວດກະສິກຳ ປ່າໄມ້ ເພື່ອກຳນົດຂົງເຂດ ແລະ ຫົວຂໍ້ສຳລັບການຄົ້ນຄ້ວາຂອງໂຄງການຄົ້ນຄ້ວາເຂດພູ ດອຍ ແລະ ພັດທະນາຄວາມເຂັ້ມແຂງ ທີ່ ສຄກປ (ວັນທີ 17 -21 / 03 / 2008) ເຊິ່ງກອງປະຊຸມດັ່ງກ່າວໄດ້ເປັນ ເອກະພາບກຳນົດຂົງເຂດການຄົ້ນຄວ້າ, ຫົວຂໍ້ການຄົ້ນຄວ້າ ປະຈຳສົກປີ 2008-2009.

ສະນັ້ນ, ບົດລາຍງານສະບັບນີ້ ໄດ້ຖືກຂຽນຂຶ້ນມາ ໂດຍມີເປົ້າໝາຍເລັ່ງໃສ່ສະໜອງຂໍ້ມູນລວມ ແລະ ສະເພາະເຈາະຈົງ ກ່ຽວກັບເມືອງ ວຽງພູຄາ ໂດຍສະເພາະແມ່ນຂໍ້ມູນທາງດ້ານກາຍະພາບ ແລະ ເສດຖະກິດ-ສັງຄົມ ແລະ ເຊື່ອວ່າບົດລາຍ ງານສະບັບນີ້ ຈະເປັນສ່ວນນຶ່ງທີ່ສຳຄັນ ໃນການກາຍເປັນບ່ອນອີງ ແລະ ເປັນຕົວຜັກດັນໃນວຽກງານການຄົ້ນຄວ້າທົດ ລອງ ທີ່ເມືອງ ວຽງພູຄາຖືກດຳເນີນໄປຢ່າງມີປະສິດທິຜົນສູງ.

## 1.1 ຈຸດປະສົງ.

- ໃຫ້ຮູ້ໄດ້ສະພາບດ້ານຊີວະກາຍະພາບ ແລະ ເສດຖະກິດ-ສັງຄົມຂອງແຕ່ລະເຂດນິເວດກະສິກຳ ແລະ ປ່າໄມ້ ຢູ່ໃນ ເມືອງ ວຽງພູຄາ, ແຂວງ ຫລວງນ້ຳທາ
- ໃຫ້ຮູ້ໄດ້ວິຖີການດຳລົງຊີວິດຂອງ ປະຊາຊົນ ໂດຍສະເພະ ແຕ່ລະຊົນເຜົ່າ ໃນແຕ່ລະເຂດນິເວດກະສິກຳ ແລະ ປ່າໄມ້ ຢູ່ ເມືອງ ວຽງພູຄາ ແຂວງ ຫລວງນ້ຳທາ

- ສາມາດຈັດລຽງບູລິມະສິດ, ກຳນົດປະເດັນສຳຄັນ, ບັນຫາ, ທ່າແຮງ, ໂອກາດ ແລະ ຂໍ້ຈຳກັດໃນການພັດທະ ນາ ຂອງແຕ່ລະເຂດນິເວດກະສິກຳ ແລະ ປ່າໄມ້.
- ສາມາດກຳນົດໄດ້ຂົງເຂດການຄົ້ນຄວ້າ, ການສົ່ງເສີມ ແລະ ທາງເລືອກທີ່ດີໃນການພັດທະນາ ເພື່ອແນໃສ່ການແກ້ໄຂບັນຫາຕ່າງໆ.
- ເພື່ອສ້າງຄວາມເຂົ້າໃຈກ່ຽວກັບປະເດັນສຳຄັນ ແລະ ກຸ່ມບັນຫາທີ່ໄດ້ຮັບຈາກຜົນຂອງການວິເຄາະ AEA ທີ່ມີ ຜົນກະທົບໃນລະດັບບ້ານເປົ້າໝາຍຂອງໂຄງການ.

## II. ວິທີການຈັດຕັ້ງປະຕິບັດ.

## 2.1 ເຄື່ອງມືທີ່ນຳໃຊ້

### 2.1.1 ການວິເຄາະ ແລະ ແບ່ງເຂດນິເວດກະສິກຳ ປ່າໄມ້(AEZ ແລະ AEA) ລະດັບເມືອງ:

ແມ່ນການວິເຄາະລະບົບ ແລະ ແບ່ງເຂດນິເວດກະສິກຳ ປ່າໄມ້ (AEZ ແລະ AEA) ແມ່ນເພື່ອອະທິບາຍຄຸນລັກສະນະຕ່າງໆ ຂອງແຕ່ລະເຂດນິເວດ ກະສິກຳ ປ່າໄມ້, ກຳນົດປະເດັນສຳຄັນ, ກຸ່ມບັນຫາຕ່າງໆ ແລະ ຈັດບູລິມະສິດສຳ ລັບການພັດທະນາ ໃນແຕ່ລະເຂດນິເວດກະສິກຳ ປ່າໄມ້ ລະດັບເມືອງ.

### 2.1.2 ການປະເມີນຜົນແບບມີສ່ວນຮ່ວມກັບຊາວກະສິກອນ (PRA) ໃນຂັ້ນບ້ານ:

ການປະເມີນຜົນຊົນນະບົດແບບມີສ່ວນຮ່ວມກັບຊາວກະສິກອນ (PRA) ໃນບ້ານເປົ້າໝາຍເພື່ອກຳນົດເຕັກໂນ ໂລຊີທີ່ ເໝາະສົມໃນການຂະຫຍາຍຂົງເຂດການຄົ້ນຄ້ວາຮ່ວມກັບໂຄງການໃນຕໍ່ໜ້າ.

## 2.2 ຂະບວນການຈັດຕັ້ງປະຕິບັດ.

### 2.2.1 ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ:

- ຈັດປະຊຸມສົນທະນາ ແລະ ແລກປ່ຽນຄວາມຄິດຄວາມເຫັນ ກ່ຽວກັບການວິທີ ແລະ ຂໍ້ແນະນຳໃນການເກັບກຳຂໍ້ມູນກຳນົດບັນຫາ ແລະ ການສຳມະໂນບັນຫາຢູ່ໃນແຕ່ລະເມືອງເປົ້າໝາຍ ພ້ອມດຽວກັນ ກໍ່ ໄດ້ກຳນົດບູລິມະສິດໃນການຄັດເລືອກກຸ່ມບ້ານເປົ້າໝາຍຂອງໂຄງການ ເຊິ່ງມີເງື່ອນໄຂໃນການຄັດ ເລືອກ ຄື:
  1. ແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ.
  2. ເປັນຕົວແທນແຕ່ລະບົບນິເວດກະສິກຳ ແລະ ປ່າໄມ້ ໃນລະດັບເມືອງ(AEZ)
  3. ບ້ານທຸກຍາກ
  4. ມີເສັ້ນທາງສາມາດເຂົ້າເຖິງໄດ້ ສອງລະດູ.
  5. ຕົວແທນຂອງຊົນເຜົ່າ
  6. ສະເພາະເປົ້າໝາຍໃດໜຶ່ງ.

7. ການລົງທຶນດ້ານກະສິກຳ ແລະ ປ່າໄມ້(ຢາງພາລາ, ມັນຕົ້ນ ແລະ ອື່ນໆ)

### 2.2.2 ຢູ່ ເມືອງ ວຽງພູຄາ ແຂວງ ຫລວງນ້ຳທາ

- **ສະເໜີຈຸດປະສົງ ແລະ ກິດຈະກຳການເຄື່ອນໄຫວ**
- **ກຳນົດແບ່ງເຂດນິເວດກະສິກຳ ປ່າໄມ້ ແລະ ອະທິບາຍຄຸນລັກສະນະ ຂອງແຕ່ລະເຂດນິເວດ**

- ປັບປຸງຂໍ້ມູນໃຫ້ສົມບູນ ແລະ ກຳນົດແບ່ງເຂດນິເວດກະສິກຳ
- ການອະທິບາຍເຂດນິເວດກະສິກຳ ປ່າໄມ້(ຕາມຈຸຄົ້ນຄ້ວາ ແລະ ບັນທຶກຄຸນລັກສະນະແຕ່ລະເຂດ ນິເວດກະສິກຳ ປ່າໄມ້
- ກຳນົດບູລິມະສິດກຸ່ມບ້ານພັດທະນາຂອງເມືອງ

- **ການວິເຄາະຂໍ້ມູນດ້ານກາຍຍະພາບ ແລະ ເສດຖະກິດຕາມເຂດ ນິເວດກະສິກຳ ປ່າໄມ້**

- ປຶກສາຫາລືບັນຫາຫຼັກ ແລະ ສາຍເຫດທີ່ຕົ້ນຕໍ
- ປຶກສາຫາລືກາລະໂອກາດຂອງແຕ່ລະເຂດນິເວດກະສິກຳ ປ່າໄມ້

- **ການກຳນົດ ແລະ ອະທິບາຍຄຸນລັກສະນະຕ່າງໆຂອງ ເຂດນິເວດ ກະສິກຳ ປ່າໄມ້ ໃນກຸ່ມບ້ານພັດທະນາ**

- ຊ້ອນທັບແຜນທີ່ຂອບເຂດນິເວດກັບແຜນທີ່ເຂດກຸ່ມບ້ານພັດທະນາ
- ປຶກສາຫາລືກ່ຽວກັບແຜນພັດທະນາກຸ່ມບ້ານຕາມຍຸດທະສາດເມືອງ
- ປຶກສາຫາລືກ່ຽວກັບລະບົບການຜະລິດຕົ້ນຕໍ (ລະບົບຟາມ) ກຸ່ມບ້ານພັດທະນາ
- ປຶກສາຫາລືກ່ຽວກັບວິຖີການດຳລົງຊີວິດຂອງຊາວບ້ານ
- ປຶກສາຫາລືກ່ຽວກັບການຄຸ້ມຄອງຊັບພະຍາກອນທຳມະຊາດ

- **ວິເຄາະຂໍ້ມູນດ້ານກາຍຍະພາບ ແລະ ເສດຖະກິດຂອງກຸ່ມບ້ານພັດທະນາ**

- ປຶກສາຫາລືບັນຫາຫຼັກ ແລະ ສາຍເຫດທີ່ຕົ້ນຕໍ
- ປຶກສາຫາລືກາລະໂອກາດໃນການ ພັດທະນາຂອງກຸ່ມບ້ານພັດທະນາທີ່ເປັນຈຸດສຸມ

- **ກຳນົດທ່າແຮງ ກ່ຽວກັບຂົງເຂດ ການຄົ້ນຄ້ວາໃນກຸ່ມບ້ານ**

- ປຶກສາຫາລືທ່າແຮງສຳລັບຂົງເຂດການຄົ້ນຄ້ວາ
- ຈັດບູລິມະສິດສຳລັບຂົງເຂດຂອງ ການຄົ້ນຄ້ວາ

- **ກຳນົດມາດຖານ ແລະ ຄັດເລືອກບ້ານເປົ້າໝາຍສຳລັບການຄົ້ນຄ້ວາ**

- ຄັດເລືອກບ້ານເປົ້າໝາຍກະກຽມເຮັດການສຳມະໂນບັນຫາ

- **ການສຳມະໂນບັນຫາຕາມກຸ່ມຊາວກະສິກອນ**:

- ປະຫັວດຄວາມເປັນມາຂອງບ້ານ
- ແຜນທີ່ສະພາບທົ່ວທາງເຂົ້າຫາບ້ານ(ບົດບາດຍິງ-ຊາຍ, ຊົນເຜົ່າ)
- ວິເຄາະລະບົບຜະລິດກະສິກຳ(ບົດບາດຍິງ-ຊາຍ, ຊົນເຜົ່າ)
- ວິເຄາະວິຖີການດຳລົງຊີວິດ(ບົດບາດຍິງ-ຊາຍ, ຊົນເຜົ່າ)

- ວິເຄາະ ແລະ ຈັດຖານະຄວາມທຸກຍາກ (ຍິງ-ຊາຍ, ຊົນເຜົ່າ, ຊົນຊັ້ນ)
- ວິເຄາະ ແລະ ຈັດລະດັບຂອງກຸ່ມບັນຫາ(ຍິງ-ຊາຍ, ຊົນເຜົ່າ, ຊົນຊັ້ນ)
- ສັງລວມຄໍາຄິດຄໍາເຫັນຈາກຊາວບ້ານ
- ແຕ່ລະຈຸສະຫຼູບຜົນໄດ້ຮັບຕໍ່ຊາວບ້ານເພື່ອຄວາມເປັນເອກະພາບ

## 2.3 ພະນັກງານເຂົ້າຮ່ວມ

| ລ/ດ | ຊື່ ແລະ ນາມສະກຸນ | ລ/ດ | ຊື່ ແລະ ນາມສະກຸນ |
|---|---|---|---|
| 1 | ທ. ສີວິໄລ ປັນແກ້ວ | 12 | ແນວໂຮມເມືອງ 1 ທ່ານ |
| 2 | ທ. ຄໍາພາ ຈັນທິລາດ | 13 | ທ. ຄໍາສອນ ສີມມະນີວົງ |
| 3 | ທ. ສົມພະຈັນ | 14 | ທ. ຈັນທະວິໄຊ ແກ້ວບຸນນໍາ |
| 4 | ທ. ສົມພັນ ສະກັນເພັດ | 15 | ທ. ພຸນສັບ |
| 5 | ທ. ເຈີ ສັນຕິສຸກ | 16 | ທ. ໂຕ່ ສຸພົງສີ |
| 6 | ທ. ສີພັນ ສີຫາລາດ | 17 | ທ. ສາຍສະຫມອນ ທອນບັນດິດ |
| 7 | ທ. ສົມນຶກ ສຸວັດ | | |
| 8 | ຫົວໜ້າຫ້ອງວ່າການ1ທ່ານ | | |
| 9 | ຫົວໜ້າຫ້ອງການແຜນ ການ1ທ່ານ | | |
| 10 | ຫົວໜ້າຫ້ອງການ ການ ລົງທຶນ 1 ທ່ານ | | |
| 11 | ປະທານ ສະຫະພັນ ແມ່ຍິງ1ທ່ານ | | |

## 2.4 ຂໍ້ມູນທີ່ໄດ້ນໍາໃຊ້

| ຂໍ້ມູນທີ່ມີ | | ປະເພດຂໍ້ມູນທີ່ຈໍາເປັນ | | | |
|---|---|---|---|---|---|
| ປະເພດຂໍ້ມູນ | ລະດັບ | ປະເພດຂໍ້ມູນ | ລະດັບ | ແຫຼ່ງຂອງຂໍ້ມູນ | ຜູ້ຮັບພິດຊອບ |
| ແຜນທີ່ເສັ້ນວະດັບ | ເມືອງ | ຂອບເຂດກຸ່ມບ້ານ | ກຸ່ມບ້ານພັດທະນາ | ສໍາຫຼວດໃນສະໜາມ | ວາງແຜນນໍາໃຊ້ທີ່ດິນ |
| ການນໍາໃຊ້ທີ່ດິນ & ປົກຫູ້ມປ່າໄມ້ | ເມືອງ | ທີ່ຕັ້ງບ້ານ, ພົນລະເມືອງ | ລະດັບບ້ານ | ສູນສະຖິຕິແຫ່ງຊາດ ແລະ ພາກສະໜາມ | ວາງແຜນນໍາໃຊ້ທີ່ດິນ ເສດຖະກິດ ສັງຄົມ |
| DEM | ເມືອງ | ການນໍາໃຊ້ທີ່ດິນ & ປົກຫູ້ມປ່າໄມ້ | ເມືອງ ແລະ ກຸ່ມບ້ານພັດທະນາ | ພາບຖ່າຍດາວທຽມ ສໍາຫຼວດໃນສະໜາມ | ວາງແຜນນໍາໃຊ້ທີ່ດິນ ປ່າໄມ້ |

| | | | | | |
|---|---|---|---|---|---|
| | | ໃນປະຈຸບັນ | | | |
| ດິນ ແລະ ຄວາມເໝາະສົມຂອງດິນ | ເມືອງ | ເນື້ອທີ່ປ່າໄມ້ | ເມືອງ ແລະ ກຸ່ມບ້ານພັດທະນາ | ສຳຫຼວດໃນສະໜາມ | |
| ສາຍນ້ຳ,ຫົນທາງ, ຈຸດທີ່ຕັ້ງຂອງບ້ານ | ເມືອງ | ການມອບດິນ ມອບປ່າ | ເມືອງ, ກຸ່ມບ້ານ ແລະ ບ້ານ | ສຳຫຼວດໃນສະໜາມ | |
| ລະດັບຄວາມສູງ ຄວາມຄ້ອຍຊັນ | ເມືອງ | ກິດຈະກຳການພັດທະນາຂອງໂຄງການ, ສຳປະທານ | ເມືອງ ແລະ ກຸ່ມບ້ານພັດທະນາ | ສຳຫຼວດໃນສະໜາມ | ເສດຖະກິດ ສັງຄົມ ລະບົບຜະລິດກະສິກຳ ວາງແຜນນຳໃຊ້ທີ່ດິນ |
| ຜົນຜະລິດກະສິກຳ ປ່າໄມ້ ປະຈຳປີ | ເມືອງ | ຜົນຜະລິດກະສິກຳ ປ່າໄມ້ ປະຈຳປີ | ກຸ່ມບ້ານພັດທະນາ | ສຳຫຼວດໃນສະໜາມ | ລະບົບຜະລິດກະສິກຳ ເສດຖະກິດ ສັງຄົມ |

## III. ຜົນໄດ້ຮັບ.

### 3.1 ສະພາບລວມ.

#### 3.1.1 ທີ່ຕັ້ງ ແລະ ຂອບເຂດຊາຍແດນ:

ເມືອງ ວຽງພູຄາ ແມ່ນເມືອງ ໜຶ່ງທີ່ນອນຢູ່ໃນ 47 ເມືອງທຸກຍາກທົ່ວປະເທດ ແລະ ຈັດຢູ່ໃນເມືອງ ທຸກຍາກ ຂອງແຂວງ ຕັ້ງຢູ່ຫ່າງຈາກເທດສະບານແຂວງ ປະມານ 60 ກິໂລແມັດ; ເຊິ່ງມີຂອບເຂດຊາຍ ແດນ ຕິດຈອດຄື:

- ທິດເໜືອຕິດກັບ ເມືອງ ຫຼວງນ້ຳທາ.
- ທິດໃຕ້ຕິດກັບເມືອງ ຫ້ວຍຊາຍ
- ທິດຕາເວັນອອກຕິດກັບເມືອງນາແລ
- ທິດຕາເວັນຕົກຕິດກັບເມືອງລອງ ແລະ ເມືອງ ເມິງ

ເມືອງວຽງພູຄາ ມີເນື້ອທີ່ກວ້າງຂວາງສົມຄວນເຊິ່ງມີເນື້ອທີ່ປະມານ 204,447 ເຮັກຕາ, ເນື້ອທີ່ສ່ວນໃຫຍ່ເປັນພູດອຍ ກວມເອົາ 85% ແລະ ເປັນເຂດທົ່ງພຽງ 15%. ມີລະດັບຄວາມສູງຈາກໜ້ານ້ຳທະເລປານກາງຢູ່ໃນລະຫວ່າງ 600 ຫາ 2,018 ແມັດ

#### 3.1.2 ການປົກຄອງ ແລະ ພົນລະເມືອງ.

ໂດຍອີງໃສ່ການຕັ້ງຖິ່ນຖານພູມລຳເນົາຂອງປະຊາຊົນພາຍໃນເມືອງ, ການຕັ້ງກຸ່ມບ້ານພັດທະນາແມ່ນປະກອບມີ 7 ກຸ່ມ ຄື: ກຸ່ມບ້ານພັດທະນາບ້ານນ້ຳສິງ, ບ້ານທົ່ງວ, ນ້ຳຟ້າ, ນ້ຳເງິນ,ບ້ານນ້ຳແພ,ບ້ານປາກຄານ ແລະ ທົ່ງລາດ; ເຊິ່ງແຕ່ລະກຸ່ມບ້ານພັດທະນາ ແມ່ນປະກອບມີຫຼາຍຊົນເຜົ່າ ຢູ່ຢ່າງກະແຈກກະຈາຍ; ລວມທັງ

ໝົດມີ 9 ຊົນເຜົ່າຄື: ກຶມມຸຢວນ, ກຶມມຸແກວນ, ຢັ້ງ, ລື້, ມົ້ງ, ອີກໍ່, ລະເມດ, ມູເຊີ, ສາມຕາວ ແລະ ກຶມມຸຮອກ. ປະກອບມີ 46 ບ້ານ ແລະ ບ້ານທຸກຍາກ 43ບ້ານ; ມີພົນລະເມືອງທັງໝົດ 19,623 ຄົນ; ຍິງ 9,860 ຄົນ.

### 3.1.3 ສະພາບພູມອາກາດ

ມີອຸ່ນນະພູມສະເລ່ຍ ຢູ່ໃນລະຫວ່າງ 23.60 ອົງສາເຊ, ປະລິມານນ້ຳຝົນສະເລ່ຍຢູ່ໃນລະຫວ່າງ 2,195 ມີລີ ແມັດ/ປີ. ລະດູຝົນເລີ້ມແຕ່ ທ້າຍເດືອນ 4 - 11 ແລະ ລະດູແລ້ງເລີ້ມແຕ່ ເດືອນ 12 ເຖິງ ຕົ້ນເດືອນ 4. ຄວາມຊຸ່ມ ໃນອາກາດ77%

### 3.1.4 ສະພາບການນຳໃຊ້ທີ່ດິນ ແລະ ການຜະລິດກະສິກຳ.

ເວົ້າລວມແລ້ວ ການນຳໃຊ້ທີ່ດິນສ່ວນໃຫຍ່ຍັງບໍ່ທັນສາມາດນຳໃຊ້ຈົນໝົດຄວາມສາມາດ ແລະ ບໍ່ທັນຖືກເປົ້າໝາຍ ການນຳໃຊ້ ເຊິ່ງເຫັນໄດ້ວ່າຫຼາຍເຂດດິນກະສິກຳຍັງປະເປັນເຮື້ອ, ປ່າເລົ່າອ່ອນ ບໍ່ທັນບຸກເບີກຊັບຊ່າວເຮັດນາ; ແຕ່ກົງ ກັນຂ້າມການນຳໃຊ້ດິນເຂດພູສູງກວມຫຼັງພູ ເປັນຕົ້ນ

ການນຳໃຊ້ທີ່ດິນ ແລະ ລະບົບການຜະລິດກະສິກຳ

- ເນື້ອທີ່ດິນກະສິກຳ 33,641 ຮຕ
- ເນື້ອທີ່ນາ 908ເຮັກຕາ
- ເນື້ອທີ່ໄຮ່ 1,830ເຮັກຕາ
- ເນື້ອທີ່ນາແຊງ 205ເຮັກຕາ.
- ເນື້ອທີ່ປູກພືດພັກ 155ເຮັກຕາ
- ເນື້ອທີ່ສວນໄມ້ໃຫ້ໝາກ 11ເຮັກຕາ
- ເນື້ອທີ່ສວນສາລີ 652ເຮັກຕາ
- ເນື້ອທີ່ສວນມັນຕົ້ນ 250ເຮັກຕາ
- ເນື້ອທີ່ການລ້ຽງສັດ 500ເຮັກຕາ
- ເນື້ອທີ່ປູກຫຍ້າ 3 ເຮັກຕາ

### 3.1.5 ສະພາບການລ້ຽງສັດ

ນອກຈາກການເຮັດນາ ແລະ ປູກພືດເສດຖະກິດ; ການລ້ຽງສັດກໍ່ແມ່ນກິດຈະກຳນຶ່ງ ທີ່ມີຄວາມສຳຄັນ ທີ່ຖືເປັນແຫຼ່ງ ສ້າງ ລາຍຮັບໃຫ້ແກ່ຄອບຄົວ ໃນນັ້ນ ລວມມີ ການລ້ຽງສັດໃຫຍ່: ຄວາຍ, ງົວ, ໝູ, ແບ້ ແລະ ສັດປີກ ເຊິ່ງກິດ ຈະກຳການລ້ຽງສັດດັ່ງກ່າວ ມີພື້ນທີ່ພຽງພໍ; ລາຍລະ ອຽດດັ່ງລຸ່ມ ນີ້:

| ລ/ດ | ປະເພດສັດລ້ຽງ | ຈຳນວນ |
|---|---|---|
| 1 | ຄວາຍ | 4,642 ໂຕ |
| 2 | ງົວ | 3,359 ໂຕ |
| 3 | ໝູ | 10,088 ໂຕ |

| | | |
|---|---|---|
| 4 | ແບ້ | 1,095 ໂຕ |
| 5 | ສັດປີກ | 21,957 ໂຕ |

**3.1.6 ສະພາບການປູກໄມ້ອຸດສະຫະກຳ.**

ປະກອບມີ ໄມ້ເກດສະໜາ 103 ເຮັກຕາ ແລະ ຢາງພາລາ 723 ເຮັກຕາ; ເຊິ່ງໄມ້ດັ່ງກ່າວ ຖືໄດ້ວ່າໄມ້ເປັນເສດ ຖະກິດທີ່ນິຍົມກັນປູກ ແລະ ມີແນວໂນ້ມຂະຫຍາຍຕົວຂຶ້ນເລື້ອຍໆ.

**3.1.7 ສະພາບພື້ນຖານໂຄງລ່າງ.**

ມີທາງ R3 ຜ່ານຕົວເມືອງ, ມີເຄືອຄາຍໂທລະຄົມມະນາຄົມ, ມີໂຮງໝໍເມືອງ, ນ້ຳລິນ, ສຸກສາລາ ມີໂຮງຮຽນມັດທະຍົມຕົ້ນ ແລະ ມັດທະຍົມປາຍ. ແລະ ເສັ້ນທາງລົດສາມາດເຂົ້າເຖິງໄດ້ແຕ່ລະກຸ່ມບ້ານ, ບໍ່ມີໄຟຟ້າ

**3.1.8 ສະພາບການລົງທຶນໃນຂົງເຂດກະສິກຳ ແລະ ປ່າໄມ້**

- ບໍລິສັດລາວພາວເວີ (ປູກມັນຕົ້ນ) ຢູ່ບ້ານຫ້ວຍທິກ, ທົ່ງລາດ, ກ້ອນທຸ)
- ວິສະຫະກິດກັນທະວົງ (ປູກສາລີ) ຢູ່ບ້ານ ກ້ອນທຸ, ພູເລັດ, ນຳແພ)
- ບໍລິສັດເຊີນຮົວຫວາ (ຢາງພາລາ)
- ວິສະຫະກິດກັນທະວົງ (ສາລີ)
- ບ ໍ ລ ິ ສ ັ ດເຊ ີ ນຫວາ, ລາວຟາວເວ ີ , ເພ ື ອນຊາວກະຊ ິ ກອນເບ ີ ນສ ູ ງ, ວ ິ ສາຫະ ກ ິ ດກ ັ ນທະວ ົ ງ, ວ ິ ສາຫະກ ິ ດແກ ້ ວລ່າພ ູ ນ

**3.1.9 ທ່າແຮງຂອງເມືອງວຽງພູຄາ**

1. ມີເສັ້ນທາງເຂົ້າເຖິງໄດ້ສະດວກ
2. ສາມາດປູກຝັງເປັນສິນຄ້າໄດ້ (ມັນຕົ້ນ, ສາລີ, ຖົ່ວເຫຼືອງ)
3. ມີຫຼາຍພາກສ່ວນເຂົ້າມາລົງທຶນ (ປູກມັນຕົ້ນ, ປູກສາລີ)
4. ປະຊາຊົນມີປະສົບການຜະລິດກະສິກຳ
5. ການຕະຫຼາດສາມາດຈະຂະຫຍາຍຕົວໄດ້ໄວ
6. ມີເຄື່ອງປ່າຂອງດົງທີ່ເປັນສິນຄ້າ (ເປືອກເມືອກ, ໝາກຕາວ, ໝາກແໜ່ງ, ຂີ້ຊີ, ດອກແຂມ, ເປືອກບົງ, ໜໍ່ທຶກ…
7. ມີເນື້ອທີ່ສາມາດປູກພືດເປັນສິນຄ້າໄດ້.
8. ມີກອງທຶນສຳລັບທຳການຜະລິດ (ກອງທຶນນະໂຍບາຍ, ກອງທຶນແກ້ໄຂຄວາມທຸກຈົນ) ມີທະນາຄານເຂົ້າ…)

9. ມີຕະຫຼາດຮອງຮັບ (ມັນຕົ້ນ, ສາລີ)
10. ປ່າໄມ້ຍັງມີຄວາມອຸດົມສົມບູນ ໂດຍສະເພາະປ່າສະຫງວນນ້ຳຫ້າ
11. ມີແຫຼ່ງທ່ອງທ່ຽວທຳມະຊາດ (ປ່າສະຫງວນນ້ຳຫ້າ)
12. ມີຕົ້ນຊາທຳມະຊາດເກີດກະຈາຍຕາມພູສູງ (ນ້ຳແພ ແລະ ພູເລັດ)

## 3.2 ການກຳນົດ ແລະ ແບ່ງເຂດນິເວດກະສິກຳ ແລະ ປ່າໄມ້.

ໂດຍອີງໃສ່ສະພາບທາງດ້ານກາຍະພາບ; ເຂດນິເວດກະສິກຳ ແລະ ປ່າໄມ້ຂອງ ເມືອງ ວຽງພູຄາ ສາມາດຈັດແບ່ງ ອອກໄດ້ ເປັນດັ່ງນີ້.

- ເຂດນິເວດ1: ກຳນົດເອົາລະດັບຄວາມສູງຈາກລະດັບໜ້ານ້ຳທະເລ ແຕ່ 800-2018 ແມັດ; ເປັນເຂດພູສູງທີ່ມີຄວາມຄ້ອຍຊັນສູງ
- ເຂດນິເວດ2: ກຳນົດເອົາລະດັບຄວາມສູງຈາກລະດັບໜ້ານ້ຳທະເລ ແຕ່ 750 - 800ແມັດ; ເປັນເຂດເນີນ ສູງທີ່ມີຄວາມຄ້ອຍຊັນປານກາງ, ເປັນເຂດນຳໃຊ້ຜະລິດກະສິກຳປ່າ ໄມ້ປະສົມປະສານ.
- ເຂດນິເວດ3: ກຳນົດເອົາລະດັບຄວາມສູງຈາກລະດັບໜ້ານ້ຳທະເລ ແຕ່ 600 - 700ແມັດ.

## 3.3 ການອະທິບາຍເຂດນິເວດ

ແມ່ນຜົນໄດ້ຮັບຈາກການເກັບກຳຂໍ້ມູນແບບລະອຽດຂອງແຕ່ລະເຂດນິເວດ ໂດຍສະເພາະ ແມ່ນຄຸນະລັກສະນະ ທາງ ດ້ານກາຍະພາບ ແລະ ເສດຖະກິດ ທີ່ເກັບຈາກພາກສ່ວນທີ່ກ່ຽວຂ້ອງໃນລະດັບ ເມືອງ ເປັນຕົ້ນ ແມ່ນຫ້ອງການກະສິ ກຳ ແລະ ປ່າໄມ້ ເມືອງ, ສະຫະພັນແມ່ຍິງ, ການຄ້າ ແລະ ອື່ນໆ ເປັນຕົ້ນ; ລາຍລະອຽດຂອງແຕ່ລະເຂດນິເວດມີດັ່ງນີ້:

### 3.3.1 ການອະທິບາຍ ເຂດນິເວດ1: ເຂດພູສູງທີ່ມີຄວາມຄ້ອຍຊັນແຮງ ເປັນເຂດປ່າປ້ອງກັນ. High elevation steeply sloping protection zone.

ຕາຕະລາງ: 1. ການອະທິບາຍເຂດນິເວດ: I, ເມືອງ ວຽງພູຄາ, ແຂວງ ຫຼວງນ້ຳທາ

| ລັກສະນະດ້ານຕ່າງໆ | ການອະທິບາຍລະອຽດ |
|---|---|
| 1. ທີ່ຕັ້ງ | - ເຂດພູສູງ 800-2018 ມ |
| 2. ສະພາບພື້ນທີ່ | - ມີຄວາມສູງປະມານ 40-60% ຂຶ້ນໄປ |
| 3. ສະພາບດິນ | - ເປັນຫີນປົນດິນອ່ອນ (ດິນແດງ) ແລະ ດິນຫີນແດງແຂງ (ເຂດນ້ຳແພ) |
| 4. ສະພາບພູມອາກາດ | - ໜາວເຢັນ, ມີລົມແຮງ (ລະຫວ່າງເດືອນ 11-12) ຍາມແລງໜາວ<br>- ຊ່ວງ 10 ໃດມີນ້ຳໝອກກ້ານເທື່ອໜຶ່ງ ປະມານ 3 ວັນ |
| 5.ຄວາມປົກຫຸ້ມປ່າໄມ້(ປະເພດປ່າ) | - ຄວາມປົກຫຸ້ມຂອງປ່າໄມ້ແມ່ນຍັງມີຄວາມອຸດົມສົມບູນ (ເຂດປ່າສະຫງວນນ້ຳຫ້າ) |

| | |
|---|---|
| | - ຄວາມປົກຫຸ້ມຂອງປ່າໄມ້ຍັງມີຄວາມອຸດົມສົມບູນຢູ່ (ເຂດນ້ຳແອ່ງ) ຫຼືເຂດທົ່ງນາແປງ |
| 6. ປະເພດເຄື່ອງປ່າຂອງດົງ | - ມີໝາກແໜ່ງ, ເປືອກເມືອກ, ໜໍ່ໄມ້ທົກ, ໜໍ່ໄມ້ສາງ, ແມງແມ່, ຫວາຍຂົມ, ຂີ້ຊີ, ແຂມ |
| 7. ສະພາບສັດນ້ຳ | - ປາຝາ, ເຕົາ, ປູຮູ, ປາຈາດ, ປາມອມ |
| 8. ສະພາບສັດປ່າ | - ມີເຍືອງ, ກວາງ, ຟານ, ໝູປ່າ, ກະທິງ, ທະນີແກ້ມດຳ, ລີງ, ເສືອ, ງູເຫຼືອງ, ເລັ່ນ, ເໝັ້ນ, ຫອນ ແລະ ນາກນ້ຳ |
| 9. ການນຳໃຊ້ທີ່ດິນໃນປະຈຸບັນ | - ເຮັດໄຮ່ເຂົ້າປະມານ 90 %, ແຕ່ກ່ອນເປັນເຂດປູກຝິ່ນ |
| 10. ລະບົບການຜະລິດກະສິກຳ | - ເຮັດໄຮ່ໝູນວຽນປະມານ 5-7 ປີມາຮອບວຽນ<br>- ການລ້ຽງສັດເຊັ່ນ: ງົວ, ຄວາຍ, ໝູ, ແບ້ ລ້ຽງແບບປະປ່ອຍຕາມທຳມະຊາດ |
| 11. ພື້ນຖານໂຄງລ່າງ | - ມີເສັ້ນທາງເຂົ້າເຖິງໄດ້ 2 ລະດູ (ເຂດນ້ຳແພ, ນ້ຳວ່າງ)<br>- ມີໂຮງຮຽນປະຖົມສົມບູນ (ເຂດນ້ຳແພ, ນ້ຳວ່າງ)<br>- ສຸກສາລາ (ເຂດບ້ານ ພູລາດ, ນ້ຳແພ)<br>- ມີນ້ຳລິນທຸກບ້ານ |
| 12. ຊົນເຜົ່າ | - ຊົນເຜົ່າອາຄາ (ອີກໍ່) ມີບ້ານ ນ້ຳແພ, ນ້ຳຕະແລງ, ທົ່ງລາດ, ຫ້ວຍທົກ<br>- ມູເຊີ (ກຸຍ) ມີບ້ານ ນ້ຳວ່າງ<br>- ຂະມຸ ມີບ້ານ ນ້ຳແພ, ບ້ານ ພູລານໃຕ້ |
| 13. ວິຖີການດຳລົງຊີວິດ | - ເຮັດໄຮ່, ລ້ຽງສັດ<br>- ຫັດຖະກຳຈັກສານສ່ວນໜຶ່ງ, ຖັກແສ່ວ, ຕີເຫຼັກ, ຕີເງິນ (ບ້ານ ກໍ) |
| 14. ຖານະຄວາມທຸກຍາກ | - ສ່ວນໃຫຍ່ຍັງທຸກຍາກຢູ່ປາງບ້ານບໍ່ມີເສັ້ນທາງເຂົ້າເຖິງໄດ້ |
| 15.ໂອກາດການພັດທະນາ | - ປູກພືດເປັນສິນຄ້າ: ສາລີ, ໝາກເດືອຍ, ມັນຕົ້ນ, ໝາກງາ (ບໍ່ມີບໍລິສັດເຂົ້າເຊັນສັນຍາເກັບຊື້)<br>- ການລ້ຽງສັດ: ງົວ, ຄວາຍ, ໝູ, ແບ້<br>- ຫັດຖະກຳ: ຈັກສານ, ຖັກແສ່ວ, ທ່ອງທ່ຽວທຳມະຊາດ |
| 16. ທ່າແຮງຕົ້ນຕໍ | - ມີແຫຼ່ງທ່ອງທ່ຽວທຳມະຊາດ<br>- ມີເຄື່ອງປ່າຂອງດົງ ແລະ ໄມ້ໃຫ້ໝາກ: ໝາກຄາຍ, ໝາກກ້ຽງ, ໝາກໝັ້ນ ແລະ ປູກຊາ<br>- ການລ້ຽງສັດໃຫຍ່ ແລະ ປູກພືດໄລຍະສັ້ນ |
| 17. ຂໍ້ຈຳກັດທາງດ້ານພັດທະນາ | - ເສັ້ນທາງບໍ່ເຂົ້າເຖິງ, ດ້ານວັດທະນາທຳຍັງຕ່ຳ, ລະດັບຄວາມຕື່ນຕົວຍັງຕ່ຳ, ພະນັກງານລົງຊື້ນຳຍັງບໍ່ທັນຕໍ່ເນື່ອງ |

| | |
|---|---|
| | (ບໍ່ປົກະຕິ) |
| 18.ໂຄງການທີ່ໄດ້ຈັດຕັ້ງປະຕິບັດ | - EU, ADDRA, ADB, ໂຄງການສຶກສານອກລະບົບ (ລົບລ້າງກົໜັງສື), ໂຄງ ການອາຫານໂລກ, ໂຄງການອ່າງໂຕ່ງນ້ຳຫ້າ (ພັດທະນາຮອບດ້ານ) |
| 19.ບໍລິສັດທີ່ໄດ້ລົງທຶນ | - ບໍລິສັດລາວພາວເວີ (ປູກມັນຕົ້ນ) ຢູ່ບ້ານຫ້ວຍທຶກ, ທົ່ງລາດ, ກ້ອນທຸ)<br>- ວິສະຫະກິດກັນທະວົງ (ປູກສາລີ) ຢູ່ບ້ານ ກ້ອນທຸ, ພູເລັດ, ນຳແພ) |
| 20.ກຸ່ມບ້ານພັດທະນາ ແລະ ບ້ານ | - ມີ 4 ກຸ່ມ, ມີ 9 ບ້ານ |

ໝາຍເຫດ: EU (ພັດທະນາຊົນະບົດຂະໜາດນ້ອຍ), ADDRA (ນ້ຳລິນ), ADB (ກໍ່ສ້າງໂຮງຮຽນ, ສຶກສາ).

### 3.3.2 ການອະທິບາຍເຂດນິເວດ2: ເຂດເນີນສູງທີ່ມີຄວາມຄ້ອຍຊັນປານກາງ, ເປັນເຂດນຳໃຊ້ຜະລິດກະສິກຳ ປ່າໄມ້ ແບບປະສົມປະສານ (Mid elevation moderately sloping, Agro - forest production zone).

ຕາຕະລາງ: 2. ການອະທິບາຍເຂດນິເວດ: II, ເມືອງ ວຽງພູຄາ, ແຂວງ ຫຼວງນ້ຳທາ

| ລັກສະນະດ້ານຕ່າງໆ | ການອະທິບາຍລະອຽດ |
|---|---|
| 1. ທີ່ຕັ້ງ | - ເຂດພູສູງປານກາງປະມານ 750-850 ມ |
| 2. ສະພາບພື້ນທີ່ | - ເປັນພູດິນປົນຫີນເປັນສ່ວນໃຫຍ່, ຂອງຄວາມສູງຊັນລະດັບກາງ, ມີຫ້ວຍນ້ອຍ<br>- ມີເສັ້ນທາງເຂົ້າເຖິງ 2 ລະດູ |
| 3. ສະພາບດິນ | - ດິນບຸກ (ດິນປົນຫີນກາບ ຫຼື ດິນກະລັງຄົກ) |
| 4. ສະພາບພູມອາກາດ | - ໜາວເຢັນລະຫວ່າງເດືອນ 11-2 ຂອງທຸກໆປີ, ມີນ້ຳໝອດກ້ານລົງເປັນບາງປີ (ນ້ຳໝອກກ້າມຕັ້ງສຸດທ້າຍແມ່ນປີ 1999 - 2000) ແລະ ນອກນັ້ນນ້ຳໝອກໃນ 10 ໃດ ມີເທື່ອໜຶ່ງ. |
| 5.ຄວາມປົກຫຸ້ມປ່າໄມ້(ປະເພດປ່າ) | - ລະດັບຄວາມປົກຫຸ້ມຂອງປ່າປະມານ 40-50%<br>- ປ່າດົງເດີມຍັງມີຫຼົງເຫຼືອຢູ່ແຕ່ບໍ່ຫຼາຍ<br>- ປະເພດໄມ້ປ່ອງ: ໄມ້ທຶກ, ໄມ້ຊາງ, ໄມ້ຊອດ, ໄມ້ເຮັ້ຍ, ໄມ້ໜໍ່ຂົມ<br>- ປະເພດໄມ້: ໄມ້ກໍ່, ໄມ້ຮ່ານ້ຳ, ໄມ້ແດງນ້ຳ, ໄມ້ກວາງແດງ, ໄມ້ໝາກແຟນ |
| 6. ປະເພດເຄື່ອງປ່າຂອງດົງ | - ມີແຂມ, ໝາກແໜ່ງ, ເປືອກເມືອກ, ໜໍ່ຂົມ, ໝາກຂ່າ, ໝາກຫວາຍ, ເຄືອຫວາຍ, ປໍສາ, ເປືອກບົງ |
| 7. ສະພາບສັດນ້ຳ | - ປາຈາດ, ປາມ້ອມ, ປາໄນ, ປານິນ, ປາຄໍ່ກັ້ງ,<br>- ປາຝາ, ປູຮູ, ເຕົ່າ, ກຸ້ງ, ຫອຍ, ກົບ |
| 8. ສະພາບສັດປ່າ | - ກວາງ, ຟານ, ໝູປ່າ, ຟານໄກ້, ເຫງັນ, ເໝັ້ນ, ຫອນ, ລິງ, ຄ່າງ |

| | |
|---|---|
| | - ນົກຍຸງ, ໄກ່ຂວາ, ນົກກົງກອດ, ນົກຂໍ, ນົກເປົ້າ, ນົກເຂົາ ແລະ ນົກອິດ |
| 9. ການນຳໃຊ້ທີ່ດິນໃນປະຈຸບັນ | - ເຮັດໄຮ່, ເຮັດນາ, ປູກພືດ: ສາລີ, ມັນຕົ້ນ, ຢາງພາລາ, ໄມ້ເກດສະໜາ<br>- ພືດຜັກ: ກະລ່ຳປີ, ຜັກກາດ, ຜັກຫອມ |
| 10. ລະບົບການຜະລິດກະສິກຳ | - ເຮັດໄຮ່, ເຮັດນາ, ປູກພືດອຸດສະຫະກຳ ແລະ ປູກພືດກະສິກຳ<br>- ຈັດສັນເຂດລ້ຽງສັດ: ງົວ, ຄວາຍ, ໝູ, ແບ້, ສັດປີກ |
| 11. ພື້ນຖານໂຄງລ່າງ | - ເສັ້ນທາງສາມາດເຂົ້າເຖິງໄດ້ 2 ລະດູ<br>- ມີໂຮງຮຽນປະຖົມສົມບູນ<br>- ມີສຸກສາລາ 1 ແຫ່ງ ຢູ່ບ້ານ ນ້ຳກາບໄຕ້<br>- ມີນ້ຳລິນ (ມີໝົດທຸກບ້ານ) |
| 12. ຊົນເຜົ່າ | - ມູເຊີ: ບ້ານ ນ້ຳກາບໄຕ້ ແລະ ບ້ານ ນ້ຳກາບເໜືອ<br>- ມົ້ງ ບ້ານ ທ່າຫຼວງ<br>- ຂະມຸ ມີບ້ານ ພູລັນ, ບ້ານ ປາງຊາຍ ແລະ ບ້ານ ທົ່ງໄຮ |
| 13. ວິຖີການດຳລົງຊີວິດ | - ເຮັດນາ, ເຮັດໄຮ່, ລ້ຽງສັດ: ງົວ, ຄວາຍ, ແບ້, ໝູ, ສັດປີກ<br>- ການປູກພືດ: ມັນຕົ້ນ, ສາລີ ແລະ ເກັບກູ້ເຄື່ອງປ່າຂອງດົງ<br>- ຫາປາຕາມທຳມະຊາດ |
| 14. ຖານະຄອບທຸກຍາກ | - ທຸກຍາກ 80% |
| 15.ໂອກາດການພັດທະນາ | - ຈັດສານ: ຖັກແສ່ວ<br>- ປູກພືດເປັນສິນຄ້າ: ສາລີ, ມັນຕົ້ນ, ພືດຜັກ: ຜັກກາດ, ກະລ່ຳປີ,<br>- ໄມ້ໃຫ້ໝາກ: ໝາກກ້ຽງ, ໝາກຄາຍ, ໝາກນັດ ແລະ ໝາກກ້ວຍ<br>- ການລ້ຽງສັດ: ງົວ, ຄວາຍ, ແບ້, ໝູ, ສັດປີກ (ຈັດສັນບ່ອນລ້ຽງ) |
| 16. ທ່າແຮງຕົ້ນຕໍ | - ປູກພືດກະສິກຳ: ສາລີ, ມັນຕົ້ນ, ໝາກເດືອຍ<br>- ມີມູນເຊື້ອທາງດ້ານຫັດຖະກຳ: ຈັກສານ, ຖັກແສ່ວ<br>- ການລ້ຽງສັດ: ງົວ, ຄວາຍ, ໝູ (ມີທະນາຄານປ່ອຍສິນເຊື່ອໃຫ້)<br>- ປູກພືດອຸດສະຫະກຳ: ຢາງພາລາ, ໄມ້ເກດສະໜາ<br>- ແຫຼ່ງທ່ອງທ່ຽວ: ຖ້ຳນ້ຳມາຍ (ບ້ານ ທ່າຫຼວງ)<br>- ເຄື່ອງປ່າຂອງດົງ: ດອກແຂມ, ໝາກແໜ່ງ, ໝາກຂ່າ, ໜໍ່ຂົມ, ໜໍ່ຫົກ… |
| 17. ຂໍ້ຈຳກັດທາງດ້ານພັດທະນາ | - ຄວາມຕື່ນຕົວຂອງຊາວກະສິກຳຍັງບໍ່ທັນກວ້າງຂວາງ (ມີແນວຄິດດັ່ງເດີມ)<br>- ທາງດ້ານທຶນຮອນບໍ່ພຽງພໍ (ບຸກເບີກເນື້ອທີ່ນາບໍ່ມີເງິນຈະໄປຈ້າງ)<br>- ການລົງໂຄສະນາຍັງບໍ່ທັນຕໍ່ເນື່ອງ<br>- ການນຳໃຊ້ທີ່ດິນຍັງບໍ່ທັນໄດ້ນຳໃຊ້ເປັນປະໂຫຍດ |

| | |
|---|---|
| | - ບໍ່ມີພື້ນທີ່ເຮັດນາໄດ້ |
| 18.ໂຄງການທີ່ໄດ້ຈັດຕັ້ງປະຕິບັດ | - EU, ADDRA<br>- ໂຄງການອ່າງໂຕ່ງນໍາຫ້າ |
| 19.ບໍລິສັດທີ່ໄດ້ລົງທຶນ | - ບໍລິສັດເຊີນຮົວຫວາ (ຢາງພາລາ)<br>- ວິສະຫະກິດກັນທະວົງ (ສາລີ) |
| 20.ກຸ່ມບ້ານພັດທະນາ ແລະ ບ້ານ | - ກຸ່ມນໍ້າເງີນ: ບ້ານ ທົ່ງໄຮ, ບ້ານ ປາງຊາຍ<br>- ກຸ້ມນໍ້າກາບ: ບ້ານ ນໍ້າກາບເໜືອ, ບ້ານ ນໍ້າກາບໃຕ້, ບ້ານ ທ່າຫຼວງ<br>- ກຸ່ມນໍ້າສິງ: ບ້ານ ພູລັນເໜືອ |

ໝາຍເຫດ: EU (ພັດທະນາຮອບດ້ານ: ສາທາ, ສຶກສາ, ປູກຝັງ, ລ້ຽງສັດ…), ADDRA (ນໍ້າລິນ, ຮ່ອງນໍ້າ, ສູນອະນາໄມ…)

### 3.3.3 ການອະທິບາຍ ເຂດນິເວດ 3: ເຂດຕໍ່າບໍລິເວນລ້ອງທີ່ມີຄວາມຄ້ອຍຂ້ອນຂ້າງຮາບພຽງ ແລະ ນໍາໃຊ້ຜະລິດກະສິກໍາເປັນຕົ້ນຕໍ. Low elevation, gently sloping agricultural zone

ຕາຕະລາງ: 3. ການອະທິບາຍເຂດນິເວດ: III, ເມືອງ ວຽງພູຄາ, ແຂວງ ຫຼວງນໍ້າທາ

| ລັກສະນະດ້ານຕ່າງໆ | ການອະທິບາຍລະອຽດ |
|---|---|
| 1. ທີ່ຕັ້ງ | - ເຂດເນີນຕໍ່າ, ທົ່ງພຽງຕາມລ້ອງນໍ້າ, ລະດັບນໍ້າທະເລ 600-700ມ |
| 2. ສະພາບພື້ນທີ່ | - ເຂດພູຕໍ່າ, ມີທົ່ງພຽງຕາມລ້ອງນໍ້າ |
| 3. ສະພາບດິນ | - ດິນດໍາ, ດິນດາກ, ດິນແດງໝຽວ |
| 4. ສະພາບພູມອາກາດ | - ອົບອຸ່ນ, ໜາວເຢັນ ຊວງເດືອນ11-2, ດິນໆມີນໍ້າໝອກກ້າມ<br>- ມີໝາກເຫັບຕົກທຸກປີ ມີບາງປີຮ້າຍແຮງຄື ປີ 2007 |
| 5.ຄວາມປົກຫຸ້ມປ່າໄມ້(ປະເພດປ່າ) | - ສ່ວນຫລາຍເປັນປ່າຟື້ນຟູໃໝ່ (ອາຍຸ 5-15 ປີ) |
| 6. ປະເພດເຄື່ອງປ່າຂອງດົງ | - ໝາກແໜ່ງ, ໝາກຕາວ, ໜໍ່ຂົມ, ດອກແຂມ,ເປືອກເມືອກ, ໝາກຂ່າ, ຫວາຍຟາດ, ດວງແມ້, ຫຍ້າໃບລາຍ, ເຫັດແດງ, ເປືອກບົງ ແລະ ປໍສາ |
| 7. ສະພາບສັດນໍ້າ | - ປາພຸງ, ປາຈາດ, ປາໃບ, ປາມ້ອມ, ປາຝາ, ເຕົ່າ, ປູຮູ |
| 8. ສະພາບສັດປ່າ | - ກວາງ, ຟານ, ໝູປ່າ, ລິນ, ຟານໄກ້, ເໝັ້ນ, ຫອນ, ອົ້ນ |
| 9. ການນໍາໃຊ້ທີ່ດິນໄນປະຈຸບັນ | - ສ່ວນພຶດ (ສາລີ, ມັນຕົ້ນ, ໄມ້ເກດສະນາ, ຢາງພາລາ)<br>- ເຂົ້ານາມີການເຊາະເຈື່ອນເກືອບ 50 ຮຕ ສາມາດເຮັດໄດ້ເກືອບ 100 ຮຕ.<br>- ສ່ວນໄມ້ໃຫ້ມາກ(ໝາກກ້ຽງ,ຫມາກກ້ວຍ) |

| | |
|---|---|
| | - ສ່ວນຄົວ:(ຜັກບົ່ວ, ຜັກຫອມ, ກະລໍາປີ) ຫມາກໂມ, ສາລີຫວານ: ລະດູແລ້ງ<br>- ໄຮ່ໝູນວຽນ |
| 10. ລະບົບການຜະລິດກະສິກໍາ | - ໄຮ່ໝູນວຽນ<br>- ປູກພືດເປັນສິນຄ້າ (ພາຍຫລັງເຮັດນາປີ)<br>- ປູກໄມ້ອຸດສະກໍາ (ຢາງພາລາ, ໄມ້ເກດສະໜາ)<br>- ການລ້ຽງສັດໃຫຍ່ (ງົວ,ຄວາຍ,ແບ້), ໝູ,ສັດປີກ<br>- ໜອງປາ (ປາກະຊັງ) |
| 11. ພື້ນຖານໂຄງລ່າງ | - ເສັ້ນທາງຂ້ອນຂ້າງສົມບູນ, ສຸກສາລາ, ບໍາລິນ, ໂຮງຮຽນ (ມີບາງບ້ານ) |
| 12. ຊົນເຜົ່າ | - ຂະມຸ 20 ບ້ານ, ມົ້ງ 1 ບ້ານ, ມູເຊີ 4 ບ້ານ, ຢັ້ງ 1 ບ້ານ, ສາມຕາວ 1 ບ້ານ, ລື້ 2 ບ້ານ |
| 13. ວິຖີການດໍາລົງຊີວິດ | - ສ່ວນຫລາຍເຮັນາ, ເຮັດໄຮ່, ລ້ຽງສັດ, ຄ້າຂາຍ<br>- ເກັບກູ້ເຄື່ອງປ່າຂອງດົງ, ຕໍ່າຫູກ (ຝ້າຝ້າຍ) |
| 14. ຖານະຄວາມທຸກຍາກ | - ສ່ວນໃຫຍ່ແມ່ນທຸກຈົນ, ບາງບ້ານເຮັດໄຮ່, ຊອກຫາເຄື່ອງປ່າຂອງດົງເປັນອາຊີບ, ບາງສ່ວນຍັງຕິດພັນກັບການຄ້າຂາຍ, ບາງຄອບຄົວເຮັດນາ ແລະ ປູກພືດເປັນອາຊີບດມີຖານະອ່າວດີປະມານ 20% |
| 15. ໂອກາດການພັດທະນາ | - ການປູກພືດເປັນສິນຄ້າ (ເຂົ້າ, ສາລີ, ມັນຕົ້ນ)<br>- ປູກໄມ້ອຸດສະຫະກໍາ (ຢາງພາລາ, ໄມ້ເກດສະໜາ, ໄມ້ກິນໝາກ)<br>- ລ້ຽງສັດນ້ອຍ ແລະ ສັດປີກ (ໝູ, ແບ້, ລ້ຽງປາ, ສັດປີກ)<br>- ສາມາດພັດທະນາແຫຼ່ງທ່ອງທ່ຽວ (ມີຖໍ້າເກົ່າເລົ່າ), ຮ່ອງຮອຍມະຫາໂປດ |
| 16. ທ່າແຮງຕົ້ນຕໍ | - ມີເສັ້ນທາງຄົມມະນາຄົມສະດວກ ແລະ ມີຕະຫຼາດຮອງຮັບຜະລິດຕະພັນ (ຈີນ, ໄທ)<br>- ສະພາບພື້ນທີ່ຂ້ອນຂ້າງເໝາະສົມທໍາການຜະລິດກະສິກໍາ<br>- ການຕອບສະໜອງຂໍ້ມູນຂ່າວສານ ແລະ ເຕັກນິກວິຊາການໄດ້ສະດວກ<br>- ມີທະນາຄານນະໂຍບາຍ ແລະ ກອງທຶນລຸດຜ່ອນຄວາມທຸກຈົນ |
| 17. ຂໍ້ຈໍາກັດທາງດ້ານພັດທະນາ | - ການຢຶດຖືຮີດຄອງປະເພນີອັນເກົ່າ ແລະ ບໍ່ຄວາມຕື່ນຕົວ<br>- ຄວາມຮູ້ ແລະ ຄວາມຕື່ນຕົວຍັງມີໜ້ອຍ<br>- ການບໍລິການທາງດ້ານອຸປະກອນທໍາການຜະລິດຕອບສະໜອງຍັງບໍ່ທັນໄດ້ |

| | |
|---|---|
| 18.ໂຄງການທີ່ໄດ້ຈັດຕັ້ງປະຕິບັດ | - EU1&EU2, ADDADA, CRWRC, ADB<br>- ໂຄງການອ່າງໂຕງນ້ຳທ້າ (ພັດທະນາຄົບວົງຈອນ)<br>- ໂຄງການເດັກຍິງ ສ້າງໂຮງຮຽນ |
| 19.ບໍລິສັດທີ່ໄດ້ລົງທືນ | - ບໍລິສັດເສີນທວາ, ລາວຟາວເວີ, ເພືອນຊາວກະຊິກອນເນີນສູງ, ວິສາຫະ ກິດກັນທະວົງ, ວິສາຫະກິດແກ້ວລຳພູນ |
| 20.ກຸ່ມບ້ານພັດທະນາ ແລະ ບ້ານ | 29 ບ້ານ |

ໝາຍເຫດ: EU1&EU2 ພັດທະນາຊຸມຊົນຂະໜາດນ້ອຍໃນຊຸມຊົນ, ADDADA ສຸກຂະອະນາໄມ, CRWRC ຊົນລະປະທານ+ນາ, ADB ໃຫ້ສິນເຊື່ອ.

### 3.3.4. ການຈັດບູລະມະສິດບັນຫາໃນເຂດນິເວດຂອງເມືອງ ວຽງພູຄາ, ແຂວງ ຫຼວງນ້ຳທາ

ຕາຕະລາງ: 4. ສັງລວມການຈັດບູລິມະສິດບັນຫາຕົ້ນຕໍໃນເຂດນິເວດ

| ບັນຫາຕົ້ນຕໍ | ສາເຫດ | ວິທີແກ້ໄຂ | ໂອກາດ/ທ່າແຮງ | ຂໍ້ຈຳກັດ |
|---|---|---|---|---|
| **1. ການນຳໃຊ້ທີ່ດິນ** | | | | |
| - ນຳໃຊ້ທີ່ດິນຍັງຊະຊາຍ | - ການປະຕິບັດກົດລະບຽບໃນການ ຄຸ້ມຄອງ ແລະ ນຳໃຊ້ດິນ ຂອງປະຊາຊົນຍັງບໍ່ເຂັ້ມງວດ<br>- ການຕິດຕາມກວດຊຸກຍູ້ຍັງທົ່ວ ເຖິງ ຂອງພາກສ່ວນທີ່ກ່ຽວ ຂ້ອງ | - ຕິດຕາມກວດກາຕິດຕາມຄືນ<br>- ປະຕິບັດກົດລະບຽບ<br>- ແຈ້ງການແນະນຳໃຫ້ອຳນາດ ການປົກຄອງກ່ອນທຳການຜະລິດທຸກປີ | - ຈັດສັນ ແລະ ແບ່ງດິນ- ແບ່ງປ່າ ໃຫ້ແກ່ຄອບຄົວ | - ປະຊາຊົນບໍ່ໃຫ້ຄວາມ ຮ່ວມມືໃນການຄຸ້ມຄອງ ການນຳໃຊ້ທີ່ດິນ (ບາງ ບ້ານ) |
| **2. ດ້ານຜົນຜະລິດ** | | | | |
| - ຜົນຜະລິດກະສິກຳຕົກຕ່ຳ: ເຂົ້າ, ສາລີ | - ໃຊ້ແນວພັນພື້ນເມືອງ<br>- ບໍ່ໄດ້ນຳໃຊ້ເຕັກນິກວິທະຍາສາດ ເຂົ້າຊ່ວຍ | - ໄດ້ມີການນຳໃຊ້ແນວພັນໃໝ່ (ເຂົ້າປັບປຸງບາງຈຸດ<br>- ມີການແນະນຳກັບທີ່ | - ມີເນື້ອທີ່ປູກພືດເປັນສິນ ຄ້າ<br>- ມີແນວພັນປັບປຸງ | - ພື້ນທີ່ເປັນຄວາມຄ້ອຍ ຊັນສູງ<br>- ບໍ່ໄດ້ນຳໃຊ້ເຕັກນິກເຂົ້າ ໃນການຜະລິດ<br>- ນຳໃຊ້ແນວພັນດັ່ງເດີ່ມ |
| **3. ດ້ານເຕັກນິກ** | | | | |
| - ຊາວກະສິກອນບໍ່ມີຄວາມ ຮູ້ທາງດ້ານວິຊາການກະສິ ກຳ ແລະ ປ່າໄມ້<br>- ເຂົ້າໄຮ່, | - ການຖ່າຍທອດຄວາມຮູ້ດ້ານເຕັກ ນິກຍັງບໍ່ທົ່ວເຖິງ<br>- ຂາດງົບປະມານບໍ່ພຽງພໍ | - ຝຶກອົບຮົມບາງຈຸດ<br>- ລະດົມທຶນຈາກວິສະຫະກິດ ແລະ ໂຄງການຈຳນວນໜຶ່ງ | - ມີສູບໍລິການດ້ານເຕັກ ນິກຢູ່ປະຈຳເມືອງ ຫຼືກຸ່ມ ບ້ານ | - ປະຊາຊົນຂາດຂໍ້ມູນ ຂ່າວສານ<br>- ລະດັບການສຶກສາຍັງຕ່ຳ<br>- ບໍ່ປ່ຽນແປງວິທີການ |

| | | | | |
|---|---|---|---|---|
| ເຂົ້ານາອອກບົວ, ແມງໄມ້ທຳລາຍ | | | | ຜະ ລິດ |
| **4. ດ້ານງົບປະມານ** | | | | |
| - ການຕອບສະໜອງ ງົບປະ ມານຂອງລັດຍັງ ຊັກຊ້າ | - ງົບປະມານໃນການຊຸກຍູ້ ຈາກ ພາກ ລັດຍັງຈຳກັດ | - ໄດ້ໝູນໃຊ້ງົບປະມານ ຕົວຈິງທີ່ ມີຢູ່ | - ສ້າງກອງທຶນບ້ານ ແລະ ມີທະນາຄານ ພັດທະ ນານະໂຍບາຍ | - ງົບປະມານບໍ່ພຽງພໍ |
| **5. ດ້ານການຂຸດຄົ້ນເຄື່ອງປ່າຂອງດົງ** | | | | |
| - ການຂຸດຄົ້ນເຄື່ອງປ່າ ຂອງ ດົງຍັງຊະຊາຍ | - ປະຊາຊົນຍັງບໍ່ທັນຮູ້ວິທີການນຳ ໃຊ້ ເຄື່ອງປ່າຂອງດົງແບບຍືນຍົງ<br>- ການຈັດສັນເນື້ອທີ່ບໍ່ທັນລະອຽດ | - ເຜີຍແຜ່ລະບຽບການ ການຄຸ້ມ ຄອງ ການ ຈັດ ສັນເນື້ອທີ່ບາງ ເຂດ | - ຈັດສັນຟື້ນຟູເຄື່ອງ ປ່າ ຂອງດົງ<br>- ແນະນຳວິທີການ ເກັບກູ້ | - ການປະຕິບັດກົດລະ ບຽບບໍ່ເຂັ້ມງວດ (ທັດກຸມ)<br>- ຂາດການຈັດສັນ |
| **6. ດ້ານການລ້ຽງສັດ** | | | | |
| - ການລ້ຽງສັດແບບທຳ ມະ ຊາດ<br>- ສັດເກີດພະຍາດຕາຍ ຮ່ຳ | - ຍ້ອນຄວາມສິ້ນເຄີຍ (ດັ່ງເດີມ)<br>- ຍັງບໍ່ທັນໄດ້ຈັດສັນພື້ນທີ່ລ້ຽງ ສັດ<br>- ບໍ່ມີການສັກຢາປ້ອງກັນພະ ຍາດ ສັດ | - ມີການຈັດສັນລ້ຽງເປັນ ກຸ່ມຢູ່ ບາງ ຈຸດ<br>- ແນະນຳເຜີຍແຜນເຕັກ ນິກວິທີ ການລ້ຽງສັດໃຫ້ແກ່ ປະຊາຊົນ | - ມີພື້ນທີ່ສາມາດ ສ້າງທົ່ງ ຫຍ້າລ້ຽງສັດ<br>- ຈັດສັນເຂດລ້ຽງສັດ | - ຍັງບໍ່ມີການຈັດສັນ ພື້ນທີ່ ລ້ຽງສັດ<br>- ບໍ່ມີການຄຸ້ມຄອງ ສັດລ້ຽງ |
| **7. ດ້ານການດຳລົງຊີວິດ** | | | | |
| - ການດຳລົງຊີວິດແບບ ລ້າ ຫຼັງ ຖືຮີດຄອງແບບ ດັ່ງເດີມ | - ການສຶກຍັງຕ່ຳ<br>- ຂາດຂໍ້ມູນຂ່າວສານລະ ຫວ່າງ ບ້ານ ກັບ້ານ, ເມືອງກັບບ້ານ<br>- ຂາດການໂຄສະນາຍັງ ທົ່ວເຖິງ | - ໃຫ້ການສຶກສາອົບ ຝຶກທາງ ດ້ານ ແນວຄິດ ວັດທະນາທຳ ໃຫ້ແກ່ປະ ຊາຊົນ | - ຝຶກອົບຮົມ ແລະ ສຶກສາ ອົບຮົມ (ໄວຈະເລີນພັນ) | - ຂາດການພົວພັນຖອດ ຖອນບົດຮຽນຈາກຂ້າງ ນອກ<br>- ລະດັບການສຶກສາຍັງ ຕ່ຳ |
| **8. ດ້ານວາງແຜນພາຍໃນຄອບຄົວ** | | | | |
| - ລະດັບການກີຫັງສືຍັງ ຕ່ຳ<br>- ຂາດການວາງແຜນ ຄອບ ຄົວ (ມີລູກຫຼາຍ)<br>- ບິດບາດຍິງຊາຍຍັງ | - ໂຮງຮຽນຢູ່ໄກຈາກບ້ານ<br>- ເດັກນ້ອຍບໍ່ມີໂອກາດ ເຂົ້າໂຮງ ຮຽນ ຍ້ອນອອກ ແຮງ ງານຊ່ວຍ ພໍ່ແມ່<br>- ຂາດທຶນຮອນໃຫ້ລູກເຂົ້າໂຮງ | - ລົງເຜີຍແຜ່ບົດບາດຍິງ-ຊາຍ (ບາງຈຸດ)<br>- ຈັດຝຶກອົບຮົມກ່ຽວກັບ ບົດບາດຍິງ-ຊາຍ ໃນໄວການຈະ ເລີນພັນ | - ຝຶກອົບຮົມ ແລະ ສຶກສາ ອົບຮົມ (ໄວຈະເລີນພັນ) | - ຂາດການພົວພັນຖອດ ຖອນບົດຮຽນຈາກຂ້າງ ນອກ<br>- ລະດັບການສຶກສາ ຍັງຕ່ຳ |

| | | | | |
|---|---|---|---|---|
| ບໍ່ສະ ເໝີພາບ<br>- ຄວາມຕື່ນຕົວເຂົ້າ<br>ຮ່ວມ ກອງປະຊຸມຕ່າງ<br>ຍັງມີໜ້ອຍ | ຮຽນ<br>- ການລົງເພີຍແຜ່ບົດບາດຍິງ-<br>ຊາຍຍັງບໍ່ທົ່ວເຖິງ ແລະ ຍັງ<br>ອີງ ຕາມຮີດຄອງປະເພນີ<br>ດັ່ງເດີມ | | | - ຍັງມີແນວຄິດຄອງ<br>ເດີມ |
| **9. ດ້ານແນວພັນ** | | | | |
| - ຂາດທຶນຮອນການຈັດ<br>ຊື້ ແນວພັນ: ພືດ, ສັດ | - ລາຍຮັບຕ່ຳ | - ສ້າງກອງທຶນຂອງບ້ານ<br>ຢູ່ບາງຈຸດ<br>- ລະດົມການກູ້ຢືມຈາກ<br>ທະນາ ຄານ | - ສ້າງກອງທຶນບ້ານ<br>ແລະ<br>ມີທະນາຄານພັດທະ<br>ນາ ນະໂຍບາຍ | - ບໍ່ກ້າກູ້ຢືມຈາກກອງ<br>ທຶນ<br>- ດ້ານແນວຄິດມັກງ່າຍ |
| **10. ດ້ານການຄ້າຂາຍ** | | | | |
| - ຂາດຄວາມຮູ້ດ້ານ<br>ການຄ້າ ຂາຍ ແລະ<br>ຢູ່ໄກ ຕະຫຼາດ | - ບ້ານຢູ່ຫ່າງໄກສອກຫຼີກ | - ບຸກລະດົມໃຫ້ນຳສິນຄ້າ<br>ລົງມາ ຂາຍຢູ່ຕະຫຼາດ | - ລະດົມໃຫ້ປະຊາ<br>ຊົນນຳສິນຄ້າມາຂາຍ<br>- ໃຫ້ຂໍ້ມູນຂ່າວສານ<br>ດ້ານ ຕະຫຼາດ | - ບໍ່ມີຕະຫຼາດຫ່າງໄກ<br>- ຂາດຂໍ້ມູນດ້ານການ<br>ຕະ ຫຼາດ |
| **11. ດ້ານອາຫານ** | | | | |
| - ຂາດເຂົ້າກິນ<br>- ກຸ່ມການຜະລິດບໍ່<br>ແຂງ ແຮງ | - ເນື້ອທີ່ນາມີໜ້ອຍ<br>- ຜົນຜະລິດຕ່ຳ | - ປູກພືດທົດແທນ: ສາລີ,<br>ມັນຕົ້ນ<br>- ບຸກລະດົມຂະຫຍາຍ<br>ເນື້ອທີ່ ການຜະລິດບ່ອນ<br>ທີ່ມີເງື່ອນໄຂ<br>- ສ້າງຊົນລະປະທານ<br>- ບຸກລະດົມການເຮັດນາ<br>2 ລະ ດູ<br>- ໄດ້ມີການຝຶກອົບຮົມ<br>ບາງຈຸດ<br>- ທອດຖອນບົດຮຽນຈາກ<br>ພາຍ ນອກ | - ເຮັດໄດ້ 2 ລະດູ<br>- ປູກພືດເປັນສິນຄ້າ | - ບໍ່ມີແຮງງານ<br>(ມີໜ້ອຍ)<br>- ດິນທຳການຜະລິດຈຳ<br>ກັດ (ບໍ່ເໝາະສົມ) ມີ<br>ຄວາມ ຄ້ອຍຊັນສູງ |
| **12. ດ້ານສັນຍາເກັບຊື້** | | | | |
| - ການເກັບຊື້ຍັງບໍ່ທັດ<br>ກຸມ | - ຍ້ອນການຖືເບົາຕໍ່ຜູ້ເກັບຊື້<br>(ບໍລິ<br>ສັດກັບຜູ້ຜະລິດຖືເບົາຕໍ່ການ<br>ປະຕິບັດສັນຍາ<br>- ການຈ່າຍເງິນຊັກຊ້າ | - ບໍລິສັດໄດ້ຈ່າຍເງິນຄືນ<br>ໃຫ້ | - ສ້າງກຸ່ມຜະລິດ<br>ເພື່ອຄ້ຳປະກັນຂອງ<br>ຈຳນວນ ແລະ ຄຸນ<br>ນະພາບ ຂອງສິນຄ້າ<br>ເພື່ອຕໍ່ລອງກັບພໍ່ຄ້າ | - ຂາດການເອົາໃຈໃສ່<br>ໃນ ການຄຸ້ມຄອງການ<br>ລົງທຶນ<br>- ບໍລິສັດຍັງຍາກເອົາ<br>ປຽກ ປະຊາຊົນ |

| | | | | |
|---|---|---|---|---|
| | | | | (ກົດໜ່ວງລາ ຄາ) |
| **13. ດ້ານອຸປະກອນການຜະລິດ** | | | | |
| - ຂາດເຄື່ອງມືການຜະ ລິດ (ພາຫະນະບຸກເບີກ ລິດໄຖ) | - ລາຍຮັບໄດ້ໜ້ອຍ | - ພາກສ່ວນເອກະຊົນໄດ້ ມາລົງ ທຶນໃຫ້ກ່ອນ (ນຳເອົາລົດເຂົ້າ ມາບຸກເບີກ) | - ມີບໍລິສັດ ແລະ ວິສະຫະ ກິດມາລົງທຶນການຜ ະລິດ | - ຕົ້ນທຶນສູງ |
| **14. ດ້ານຄົມມະນາຄົມ** | | | | |
| - ເສັ້ນທາງຄົມມະນາ ຄົມ ເຂົ້າ 2 ລະດູ ບໍ່ທົ່ວເຖິງ | - ລັດບໍ່ມີງົບປະມານມີຈຳກັດ | - ຜ່ານມາໄດ້ແກ້ໄຂເທື່ອ ລະ ໜ້ອຍ ບາງຈຸດ | - ສາມາດນຳສິນມາ ຂາຍຢູ່ ເມືອງໄດ້ ແລະຜະລິດ ເປັນສິນ | - ງົບປະມານບໍ່ພຽງພໍ ຂອງ ພາກລັດ |
| **15. ດ້ານສຸຂະອານາໄມ** | | | | |
| - ເກີດພະຍາດຕຸ່ມແດງ<br>- ຂາດຄວາມເຂົ້າໃຈໃນ ການສັກຢາປ້ອງກັນ ພະ ຍາດ | - ການລົງໂຄສະນາຍັງບໍ່ທົ່ວ ເຖິງ<br>- ຄວາມຮູ້ຂອງປະຊາຊົນຍັງ ຕ່ຳ | - ຈັດຕັ້ງຄະນະຮັບຜິດ ຊອບໃນ ການສັກຢາ ໃນແຕ່ລະຈຸດ (ບ. ນ້ຳໂລະ, ບ. ນ້ຳວ່າງ, ບ້ານ ກຸ່ຍ) | - ສ້າງສຸກສາລາ<br>- ປັບປຸກອງທຶນຢາ ປະຈຳ ບ. ໃຫ້ມີການ ເຄື່ອນໄຫວ | - ກອງທຶນຢາບໍ່ທົ່ວເຖິງ<br>- ຂາດແພດບໍ່ພຽງພໍໃນ ການລົງສັກຢາ |

ໝາຍເຫດ: ແຜນພັດທະນາຂອງເມືອງ ວຽງພູຄາ, ແຂວງ ຫຼວງນ້ຳທາ ໂດຍກຳນົດເອົາ 6 ບຸລິມະສິດທາງອອກຄື:

1. ການຜະລິດເປັນສະບຽງອາຫານໃຫ້ກຸ້ມກິນ ແລະ ຂາຍເປັນສິນຄ້າ: ເຂົ້າໄຮ່, ເຂົ້ານາ, ສາລີ, ຕະກຸນ ຖົ່ວ, ໝາກງາ ແລະ ພືດອື່ນໆ
2. ການປູກພືດອຸດສະຫະກຳ: ຢາງພາລາ ແລະ ໄມ້ເກດສະໜາ
3. ການລ້ຽງສັດ (ງົວ, ຄວາຍ, ແບ້)
4. ທ່ອງທ່ຽວທຳມະຊາດ ແລະ ວັດທະນາທຳ

## IV. ສະຫຼຸບ ແລະ ຖອດຖອນບົດຮຽນ.

ຜ່ານການວິເຄາະລະບົບ ແລະ ແບ່ງເຂດດິນກະສິກຳ ແລະ ປ່າໄມ້ ຢູ່ ເມືອງ ວຽງພູຄາ ເຫັນໄດ້ວ່າໄດ້ຮັບ ການຮ່ວມມື ແລະ ປະສານງານ ຂອງພາກສ່ວນ ຕ່າງໆ ທີ່ກ່ຽວຂ້ອງ ເປັນຢ່າງດີ ໂດຍສະເພາະ ແມ່ນ ຫ້ອງການ ກະສິກຳ ແລະ ປ່າໄມ້ ທີ່ໄດ້ ສະໜອງບັນດາຂໍ້ມູນມື ສອງ ກ່ຽວກັບຂໍ້ມູນທົ່ວໄປພາຍໃນເມືອງ ເປັນຕົ້ນ ແມ່ນຂໍ້ມູນ ທາງກາຍຍະພາບ ແລະ ເສດຖະກິດ- ສັງຄົມຂອງເມືອງ. ສະນັ້ນ ເມື່ອເຫັນໄດ້ຂໍ້ມູນດັ່ງກ່າວ ທາງທີມວິເຄາະ ລະບົບ ແລະ ແບ່ງເຂດດິນກະສິກຳ ແລະ ປ່າໄມ້ ທີ່ ເມືອງ ວຽງພູຄາ ຈິ່ງສາມາດກຳນົດໄດ້ຂົງເຂດການຄົ້ນຄວ້າ ແລະ ຫົວຂໍ້ການຄົ້ນຄວ້າໄດ້ດັ່ງລາຍລະອຽດລຸ່ມນີ້:

### 4.1 ຂອງເຂດການຄົ້ນຄວ້າ

1. ຈັບສັນດິນຜະລິດກະສິກຳ
2. ການປູກພືດເປັນສິນຄ້າ: ສາລີ, ມັນຕົ້ນ
3. ການປູກຕົ້ນໄມ້ອຸດສາຫະກຳ: ຢາງພາລາ, ເກດສະໜາ ແລະ ຊາປ່າ
4. ຈັດສັນເຂດລ້ຽງສັດ ແລະ ປູກພືດອາຫານສັດ
5. ຈັດສັນເຄື່ອງປ່າຂອງດົງ ແລະ ຕໍຈັດສັນປ່າໄມ້ຄືນ
6. ສຶກສາລະບົບກອງທຶນ ແລະກູ່ມການຜະລິດ

### 4.2 ຫົວຂໍ້ການຄົ້ນຄວ້າ ປະຈຳສົກປີ 2008-2009

| ລ/ດ | ຫົວຂໍ້ການຄົ້ນຄວ້າ | ສະຖານທີ່/ບ້ານ | ທີມງານຄົ້ນຄວ້າ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຜູ້ ຮັບຜິດຊອບ | ພາກສ່ວນ | ຜູ້ຊີ້ນຳ | |
| **I** | **ການຜະລິດເປັນສິນຄ້າ** | | | | | |
| 1 | ສຶກສາຮູບແບບການຂະຫຍາຍພັນຊາປ່າ | ກຸ່ມບ້ານນໍ້າແພ | ທ.ສິມອນ | ສຄປ | ສີ ມພະຈັນ | |
| 2 | ການລ້ຽງສັດໃຫຍ່(ງົວ ແລະ ຄວາຍ) ສັດປີກ. | ບ. ນໍ້າເສືອ | ທ.ຈັນທະວີ ໄຊ | ສຄກປໝ | ບຸນລ້ຽງ | |
| 3 | ການປູກເຂົ້ານາປີ ແລະນາແຊງ ເຕັກນິກການປັບປຸງດິນ(ການໃສ່ຝຸ່ນ) | ກຸ່ມນໍ້າຟ້າ | ທ.ສິມນຶກ ສຄກປໝ | ສຄກປໝ | ARC ສຄກປໝ | |
| **II** | **ຄຸ້ມຄອງປ່າໄມ້ແບບຍືນນານ** | | | | | |
| 1 | ວາງແຜນນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ | ກຸ່ມບ້ານ, ເຂດປ່າສະຫງວນ ນໍ້າຫ້າ | ສຄປ, ສຄດ ສຄກປໝ | ສຄປ, ສຄດ ສຄກປໝ | ສີມ ພະຈັນ ຄຳພູ | |

### V. ແຜນການຕໍ່ໜ້າ:

1. ປະສານງານກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ(ສູນຄົ້ນຄ້ວາຕ່າງໆທີ່ສ່ວນກາງ, ສູນຄົ້ນຄ້ວາກະສິກຳ ປ່າໄມ້ພາກ ເໜືອ, ອຳນາດການປົກຄອງເມືອງ ແລະ ຫ້ອງການກະສິກຳ ປ່າໄມ້ເມືອງເປົ້າໝາຍ.
2. ຈັດຕັ້ງທີມງານລົງຂຽນບົດສະເໜີໂຄງການໃນແຕ່ລະເມືອງຕາມຫົວຂໍ້ຄົ້ນຄ້ວາທີ່ໄດ້ກຳນົດໄວ້.